**ປະກາດສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ**

**ເລກທີ 6 /2569**

**ເລື່ອງ: ຮັບສະໝັກບຸກຄົນເພື່ອບັນຈຸເປັນພະນັກງານສັນຍາຈ້າງຕຳແໜ່ງເຈົ້າໜ້າທີ່ວິເຄາະ**

* * * * * * * * *

ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ມີຄວາມປະສົງຈະຮັບສະໝັກບຸກຄົນເພື່ອບັນຈຸເປັນພະນັກງານສັນຍາຈ້າງຕຳແໜ່ງເຈົ້າໜ້າທີ່ວິເຄາະ ຈຳນວນ 1 ຕຳແໜ່ງ ໂດຍມີລາຍລະອຽດ ດັ່ງນີ້:

1. ໜ້າທີ່ຄວາມຮັບຜິດຊອບ
   - 1.1. ຕິດຕາມຂໍ້ມູນຂ່າວສານ ນະໂຍບາຍ ແລະ ສະຖານະການໃນ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກເພື່ອວິເຄາະ ແລະ ຈັດເຮັດລາຍງານສະຫຼຸບ
   - 1.2. ແປເອກະສານທີ່ກ່ຽວຂ້ອງທາງທັງພາສາໄທ, ພາສາລາວ ແລະ ພາສາອັງກິດ
   - 1.3. ປະສານງານເພື່ອສອບຖາມ ແລະ ຕິດຕາມປະເດັນຕ່າງໆ ລວມທັງນັດໝາຍກຳນົດການກັບໜ່ວຍງານທີ່ກ່ຽວຂ້ອງຂອງໄທ, ສປປ ລາວ ແລະ ອົງການສາກົນ
   - 1.4. ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍ

2. ຄຸນສົມບັດຂອງຜູ້ສະໝັກ
   - 2.1. ມີສັນຊາດລາວ
   - 2.2. ຈົບການສຶກສາລະດັບປະລິນຍາຕີຂຶ້ນໄປ ຫາກຈົບການສຶກສາໃນສາຂາວິຊາລັດຖະສາດ ຫຼື ນິຕິສາດຈະໄດ້ຮັບການພິຈາລະນາເປັນພິເສດ
   - 2.3. ສາມາດອ່ານ, ຂຽນ ແລະ ສະຫຼຸບໃຈຄວາມພາສາລາວ, ພາສາໄທ ແລະ ພາສາອັງກິດໄດ້ດີ
   - 2.4. ມີຄວາມຮູ້, ຄວາມເຂົ້າໃຈພື້ນຖານ ຂອງ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກ
   - 2.5. ມີອັດຖະຍາໄສດີ ແລະ ສາມາດດ້ານການປະສານງານ ແລະ ຕິດຕໍ່ກັບໜ່ວຍງານຕ່າງໆໄດ້
   - 2.6. ສາມາດໃຊ້ໂປແປຣມພື້ນຖານເຊັ່ນ: Microsoft Office ໄດ້ດີ ແລະ ມີທັກສະການໃຊ້ອິນເຕີເນັດໄດ້ເປັນຢ່າງດີ, ຫາກມີທັກສະໃນການໃຊ້ໂປແກຣມອື່ນໆ ເຊັ່ນ: Canva, WordPress...ຈະໄດ້ຮັບການພິຈາລະນາເປັນພິເສດ
   - 2.7. ມີຄວາມສາມາດໃນການບໍລິຫານຈັດການເວັບໄຊແລະຈັດເຮັດສື່ໃນຮູບແບບຕ່າງໆ
   - 2.8. ຫາກມີປະສົບການເຮັດວຽກ ຈະໄດ້ຮັບການພິຈາລະນາເປັນພິເສດ
   - 2.9. ມີຄວາມຮັບຜິດຊອບສູງ ສາມາດເຮັດວຽກລ່ວງເວລາ ຫຼື ນອກສະຖານທີ່ໄດ້ຫາກຈຳເປັນ
   - 2.10. ມີມະນຸດສຳພັນທີ່ດີ ແລະ ສາມາດເຮັດວຽກເປັນທີມໄດ້
   - 2.11. ສາມາດເດີນທາງມາສອບຂໍ້ຂຽນ ແລະ ສອບສຳພາດທີ່ສະຖານເອກອັກຄະຣາຊະທູດດ້ວຍຕົວເອງໄດ້

3. ເອກະສານປະກອບການສະໝັກ
   - 3.1. ຮູບຖ່າຍ 2 ນິ້ວ 1 ໃບ ຖ່າຍໄວ້ບໍ່ເກີນ 6 ເດືອນ
   - 3.2. ສຳເນົາບັດປະຈຳໂຕ
   - 3.3. ສຳເນົາສຳມະໂນຄົວ
   - 3.4. ໃບຢັ້ງຢືນການສຶກສາ (ປະລິນຍາ/ເອກະສານຜົນການສຶກສາ)

ຜູ້ທີ່ສົນໃຈສາມາດຂໍຮັບ ແລະ ສົ່ງໃບສະໝັກໄດ້ທີ່ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ, ຖະໜົນໄກສອນພົມວິຫານ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ທຸກວັນໃນເວລາລັດຖະການ ຫຼື ອີເມວ thaiembassy.vte@mfa.go.th ແລະ ສາມາດດາວໂຫຼດໃບສະໝັກຈາກ https://shorturl.asia/wAcj5 ແລະ ເຟສບຸກ Royal Thai Embassy, Vientiane ໂທ 021-214581-3 (ໝົດເຂດຮັບສະໝັກວັນທີ 5 ພຶດສະພາ 2026) ໂດຍສະຖານເອກອັກຄະຣາຊະທູດຈະປະກາດລາຍຊື່ຜູ້ທີ່ໄດ້ຮັບການຄັດເລືອກ ແລະ ແຈ້ງລາຍລະອຽດເພີ່ມຕື່ມກ່ຽວກັບວັນສອບເສັງແລະສຳພາດໃຫ້ຊາບພາຍຫຼັງ.

ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ

ນະຄອນຫຼວງວຽງຈັນ

24 ເມສາ 2026